**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ — ເລກທີ 3264 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2025

# ຂໍ້ຕົກລົງ
# ວ່າດ້ວຍແບບອຸດສາຫະກຳ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 1147/ກຊປ, ລົງວັນທີ 19 ພະຈິກ 2025.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ເປັນຕົ້ນ ການຈົດທະບຽນແບບອຸດສາຫະກຳ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ ແລະ ອົງການຄຸ້ມຄອງວຽກງານແບບອຸດສາຫະກຳ ເພື່ອແນໃສ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ແບບອຸດສາຫະກຳ

ແບບອຸດສາຫະກຳ ແມ່ນຮູບແບບ ຫຼື ຮູບຮ່າງ ຂອງຜະລິດຕະພັນທີ່ສ້າງຂຶ້ນ, ຊຶ່ງປະກອບດ້ວຍ ຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ຄັດຄ້ານ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ, ລົບລ້າງ ແລະ ການສະເໜີອື່ນໆ ກ່ຽວກັບແບບອຸດສາຫະກຳ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ຄັດຄ້ານ ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ, ລົບລ້າງ ແລະ ການສະເໜີອື່ນໆ ກ່ຽວກັບແບບອຸດສາຫະກຳ;

3. **ບຸກຄົນທີສາມ ທີ່ສະເໜີຂໍຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງສິດ ໄດ້ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ;

4. **ການຄັດຄ້ານ** ໝາຍເຖິງ ການຍື່ນຄຳສະເໜີຂໍຄັດຄ້ານ ໂດຍບຸກຄົນທີສາມ ຕໍ່ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ;

5. **ບຸກຄົນທີສາມ ທີ່ຍື່ນຄຳສະເໜີຂໍ ຍົກເລີກ ຫຼື ລຶບລ້າງ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ເປັນເຈົ້າຂອງສິດ ທີ່ຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳ;

6. **ການຍົກເລີກ** ໝາຍເຖິງ ການຍື່ນຄຳຮ້ອງຂໍຍົກເລີກ ການຈົດທະບຽນແບບອຸດສາຫະກຳ ບາງສ່ວນ ຫຼື ທັງໝົດ ໂດຍຜູ້ຂໍຍົກເລີກ;

7. **ການລຶບລ້າງ** ໝາຍເຖິງ ການຍື່ນຄຳຮ້ອງໂດຍຜູ້ຂໍລຶບລ້າງ ຕໍ່ການຈົດທະບຽນແບບອຸດສາຫະກຳທັງໝົດ;

8. **ໝວດ** ໝາຍເຖິງ ການຈັດໝວດຂອງສາກົນ ກ່ຽວກັບປະເພດຂອງແບບອຸດສາຫະກຳ ຕາມການຈັດໝວດໂລກາໂນ (Locarno Classification) ສຳລັບການຈົດທະບຽນແບບອຸດສາຫະກຳ;

9. **ນັກອອກແບບ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ຮ່ວມກັນອອກແບບ ຮູບແບບ ຫຼື ຮູບຮ່າງ ຂອງຜະລິດຕະພັນໃດໜຶ່ງ;

10. **ການແຍກຄຳຮ້ອງ** ໝາຍເຖິງ ການແຍກຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳດຽວອອກເປັນສອງ ຫຼື ຫຼາຍສະບັບ ໂດຍຜູ້ຮ້ອງຂໍ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບແບບອຸດສາຫະກຳທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;

11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບແບບອຸດສາຫະກຳ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;

12. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງຜູ້ຖືສິດ ຫຼື ເຈົ້າຂອງສິດ ໄດ້ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

13. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດແບບອຸດສາຫະກຳ ທີ່ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ດຳເນີນການອື່ນ ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

14. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ຫຼື ທະນາຍຄວາມ ທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງແບບ ທີ່ມີທີ່ຢູ່ ໃນ ສປປ ລາວ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງແບບຈາກຕ່າງປະເທດ ທີ່ບໍ່ມີທີ່ຢູ່ໃນ ສປປ ລາວ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ດຳເນີນການອື່ນ;

15. **ວັນບູລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍໄດ້ຍື່ນຂໍຈົດທະບຽນແບບອຸດສາຫະກຳ ຢູ່ສຳນັກງານອື່ນທີ່ກ່ຽວຂ້ອງກັບຊັບສິນທາງປັນຍາ ຢູ່ຕ່າງປະເທດ ຫຼື ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານແບບອຸດສາຫະກຳ ຢູ່ ສປປ ລາວ.

## ໝວດທີ 2
## ການຈົດທະບຽນແບບອຸດສາຫະກຳ

### ມາດຕາ 5 ເງື່ອນໄຂການໄດ້ຮັບໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ

ແບບອຸດສາຫະກຳ ທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍສູ່ສາທາລະນະຊົນມາກ່ອນ ດ້ວຍສື່ສິ່ງພິມ, ສື່ເອເລັກໂຕຣນິກ, ການນຳໃຊ້ຕົວຈິງ, ການວາງສະແດງ ຫຼື ຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບູລິມະສິດ ຂອງຄຳຮ້ອງຂໍຮັບໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ;

2. ເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸນັ້ນເກີດມີຮູບຊົງພາຍນອກພິເສດ.

ສຳລັບແບບອຸດສາຫະກຳ ທີ່ບໍ່ສາມາດໄດ້ຮັບການຈົດທະບຽນແບບອຸດສາຫະກຳ ມີດັ່ງນີ້:

1. ແບບ ທີ່ມີຮູບຊົງພາຍນອກ ເກີດຈາກຮູບຊົງເຕັກນິກຂອງວັດຖຸ ຊຶ່ງໃນນັ້ນ ແບບໄດ້ຖືກນຳໃຊ້ ຫຼື ສ້າງໃຫ້ເປັນຮູບຮ່າງຂຶ້ນມາກ່ອນແລ້ວ ລວມທັງ ລັກສະນະທາງດ້ານເຕັກນິກອື່ນທີ່ກ່ຽວຂ້ອງກັບແບບອຸດສາຫະກຳ ເປັນຕົ້ນ ວັດສະດຸທີ່ນຳໃຊ້, ວິທີການຜະລິດ ຫຼື ການປະຕິບັດງານ;

2. ແບບ ທີ່ຂັດຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 6 ການກວດຄົ້ນແບບອຸດສາຫະກຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍກວດຄົ້ນແບບອຸດສາຫະກຳ ໃຫ້ຍື່ນຄຳຮ້ອງຕໍ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ, ໂດຍຕ້ອງລະບຸໝວດຂອງແບບອຸດສາຫະກຳ ທີ່ຕ້ອງການກວດຄົ້ນພ້ອມທັງຈ່າຍຄ່າບໍລິການ.

ພາຍຫຼັງທີ່ໄດ້ຮັບຄຳຮ້ອງ, ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດຄົ້ນແບບອຸດສາຫະກຳ ຢູ່ໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ແລະ ແຈ້ງຜົນການກວດຄົ້ນແບບອຸດສາຫະກຳ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ຜົນຂອງການກວດຄົ້ນແບບອຸດສາຫະກຳ ບໍ່ສາມາດນຳໃຊ້ເພື່ອຢັ້ງຢືນ ຫຼື ເປັນຫຼັກຖານໃນທາງກົດໝາຍ ເປັນພຽງແຕ່ການກວດຄົ້ນຂໍ້ມູນ ກ່ຽວກັບແບບອຸດສາຫະກຳ ເບື້ອງຕົ້ນເທົ່ານັ້ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດກວດຄົ້ນແບບອຸດສາຫະກຳ ໄດ້ທີ່ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ ຂອງກົມຊັບສິນທາງປັນຍາ.

**ມາດຕາ 7 ເອກະສານຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ການສະເໜີຂໍຈົດທະບຽນແບບອຸດສາຫະກຳ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ;

2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;

3. ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ທີ່ບົ່ງບອກເຖິງແບບອຸດສາຫະກຳ ຢ່າງຈະແຈ້ງ, ສະແດງໃຫ້ເຫັນລັກສະນະຮູບຊົງຂອງແບບ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

4. ບົດອະທິບາຍໂດຍສັງເຂບ ແລະ ລະບຸ ກ່ຽວກັບການນຳໃຊ້ກັບຜະລິດຕະພັນ ຫຼື ສິນຄ້າ, ຖ້າຫາກແບບດັ່ງກ່າວ ໄດ້ມາຈາກພູມປັນຍາພື້ນບ້ານອັນເປັນມູນເຊື້ອ ຫຼື ການສະແດງອອກທາງດ້ານວັດທະນະທຳທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍກົງ ຫຼື ຢ່າງຫຼວງຫຼາຍ ຕ້ອງໄດ້ເປີດເຜີຍ, ແຈ້ງບອກແຫຼ່ງທີ່ມາ ຫຼື ຊຸມຊົນທ້ອງຖິ່ນ ຫຼື ຊົນເຜົ່າທີ່ກ່ຽວຂ້ອງ;

5. ໜັງສືຢັ້ງຢືນ ກ່ຽວກັບການຖືສິດຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ (Letter of Assignment/ Deed of Assignment) ກໍລະນີ ທີ່ຜູ້ຮ້ອງຂໍບໍ່ເປັນຜູ້ອອກແບບອຸດສາຫະກຳ;

6. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດໃຊ້ໄດ້ຫຼາຍແບບອຸດສາຫະກຳ ແຕ່ບໍ່ເກີນ ໜຶ່ງຮ້ອຍແບບ ໃນໝວດດຽວກັນ ຕາມການຈັດໝວດຂອງສາກົນ.

ສຳລັບສຳເນົາ ຫຼື ເອກະສານຢັ້ງຢືນອັນບູລິມະສິດ ຖ້າມີ ແລະ ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ແລະ ເອກະສານຄັດຕິດອື່ນໆ ທີ່ຍື່ນເປັນພາສາອັງກິດ, ຕ້ອງແປເປັນພາສາລາວ (ຍົກເວັ້ນ ຊື່, ທີ່ຢູ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ຄຳສັບທາງດ້ານວິຊາການ) ພາຍໃນ ເກົ້າສິບ ວັນ ພາຍຫຼັງທີ່ໄດ້ຍື່ນຄຳຮ້ອງ ໂດຍໄດ້ຮັບການຢັ້ງຢືນຈາກບໍລິສັດແປພາສາ ແລະ ຕ້ອງສະໜອງເອກະສານການແປດັ່ງກ່າວ ໃນຮູບແບບເອເລັກໂຕຣນິກ ໃຫ້ກົມຊັບສິນທາງປັນຍາ, ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າສະຫຼະສິດ.

**ມາດຕາ 8 ການຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂໍຈົດທະບຽນແບບອຸດສາຫະກໍາ ໃຫ້ຍື່ນຄໍາຮ້ອງຕໍ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໂດຍປະຕິບັດຕາມເງື່ອນໄຂຕໍ່າສຸດ ຕາມທີ່ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງຮັບເອົາຄໍາຮ້ອງ, ອອກໃບຮັບຄໍາຮ້ອງຊຶ່ງລະບຸເລກທີ ແລະ ວັນທີຍື່ນຄໍາຮ້ອງ ແລະ ອອກໃບຮັບເງິນ ທີ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;

3. ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງສະໜອງເອກະສານໃຫ້ຄົບຖ້ວນ ຕາມທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫົກສິບ ວັນ ນັບແຕ່ວັນທີຍື່ນຄໍາຮ້ອງເປັນຕົ້ນໄປ. ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ;

4. ສິ່ງສໍານວນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ທີ່ຄົບຖ້ວນຕາມທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ໃຫ້ກົມຊັບສິນທາງປັນຍາ ເພື່ອດໍາເນີນການຕາມຂັ້ນຕອນຕໍ່ໄປ;

5. ກໍລະນີ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫາກມີຈຸດປະສົງຂໍຖອນຄໍາຮ້ອງ ຫຼື ຄໍາຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍໄປແລ້ວ;

6. ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໄດ້ລະບຸວັນບູລິມະສິດ ຕາມທີ່ກໍານົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດ ຫົກ ເດືອນ ນັບແຕ່ວັນທີ່ໄດ້ຮັບວັນບູລິມະສິດເປັນຕົ້ນໄປ. ກໍລະນີ ວັນສຸດທ້າຍຂອງວັນບູລິມະສິດ ຫາກເປັນວັນພັກທາງລັດຖະການ ຫຼື ເປັນວັນທີ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄໍາຮ້ອງ, ຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປ ຈົນເຖິງວັນລັດຖະການທໍາອິດຖັດໄປ.

**ມາດຕາ 9 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄໍາຮ້ອງ**

ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງສະໜອງເອກະສານຕາມທີ່ກໍານົດໄວ້ໃນຂໍ້ 1, 3 ແລະ 6 ຂອງມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ພ້ອມທັງການລະບຸໝວດ ຂອງຜະລິດຕະພັນ ຫຼື ສິນຄ້າ ທີ່ຂໍຮັບການປົກປ້ອງພາຍໃຕ້ແບບອຸດສາຫະກໍາ ໃຫ້ຖືກຕ້ອງຕາມການຈັດໝວດສາກົນ.

**ມາດຕາ 10 ເງື່ອນໄຂຂອງ ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ (Model)**

ແບບທີ່ເປັນ ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ຕ້ອງສະແດງໃຫ້ເຫັນແບບອຸດສາຫະກໍາຢ່າງຈະແຈ້ງ ເພື່ອຊີ້ໃຫ້ເຫັນຄວາມກ່ຽວຂ້ອງກັນຂອງຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຮູບຊົງ ລວມທັງ ການນໍາໃຊ້ແບບອຸດສາຫະກໍາ;

ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ຕ້ອງສະແດງໃຫ້ເຫັນລາຍລະອຽດຂອງທຸກມຸມຕາມຄວາມຈໍາເປັນ ເພື່ອສາມາດລະບຸລັກສະນະຂອງແບບອຸດສາຫະກໍາ ໂດຍຕ້ອງສະແດງໃຫ້ເຫັນຢ່າງໜ້ອຍເຈັດມູມ ທີ່ແຕກຕ່າງກັນ ຄື: ໜ້າ, ຫຼັງ, ເທິງ, ລຸ່ມ, ຂ້າງຊ້າຍ, ຂ້າງຂວາ ແລະ ຮູບລວມ. ສໍາລັບແບບອຸດສາຫະກໍາທີ່ເປັນຊຸດ ຕ້ອງປະກອບມີ ເຈັດຮູບ ຂອງມູມທີ່ແຕກຕ່າງກັນຂອງແຕ່ລະອັນ ທີ່ປະກອບຢູ່ໃນຊຸດດັ່ງກ່າວ;

ກໍລະນີ ແບບອຸດສາຫະກໍາ ເປັນແບບສອງມິຕິ ສາມາດສະໜອງຕົວແບບເພີ່ມເຕີມ ທີ່ສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກໍາ ຊຶ່ງຕົວແບບດັ່ງກ່າວ ຕ້ອງມີຂະໜາດບໍ່ເກີນ 20x20x20 ຊັງຕີແມັດ.

ກໍລະນີ ແບບອຸດສາຫະກໍາ ເປັນແບບສາມມິຕິ ຕ້ອງປະກອບມີຮູບພາບໂດຍລວມ ແລະ ຮູບພາບເພີ່ມເຕີມອື່ນໆທີ່ຈໍາເປັນ ເພື່ອສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງບໍ່ລວມເອົາວັດຖຸອື່ນ ທີ່ບໍ່ແມ່ນອົງປະກອບຂອງແບບອຸດສາຫະກໍາ ຫຼື ພາກສ່ວນຂອງຜະລິດຕະພັນທີ່ບໍ່ກ່ຽວຂ້ອງກັບແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງເຮັດໃນຮູບແບບເອເລັກໂຕຣນິກ ຫຼື ໃນຮູບແບບເຈ້ຍ ທີ່ມີຄຸນນະພາບບໍ່ເຫຼື້ອມ, ມີຄວາມລະອຽດ ແລະ ຊັດເຈນ ໂດຍສະແດງໃຫ້ເຫັນແບບອຸດສາຫະກຳຢ່າງຈະແຈ້ງ. ບັນດາເສັ້ນສາຍ ຫຼື ລວດລາຍ ຕ້ອງມີຄວາມຈະແຈ້ງ, ເຂັ້ມ ແລະ ມີຂະໜາດບໍ່ເກີນ 20x28 ຊັງຕີແມັດ ແລະ ບໍ່ໃຫ້ນ້ອຍກວ່າ 14x20 ຊັງຕີແມັດ ຕໍ່ໜຶ່ງຮູບ.

**ມາດຕາ 11 ບົດອະທິບາຍໂດຍສັງເຂບ**

ບົດອະທິບາຍຂອງແບບອຸດສາຫະກຳ ຕ້ອງອະທິບາຍໃຫ້ເຫັນໂດຍສັງເຂບ ກ່ຽວກັບທຸກສ່ວນປະກອບທີ່ບົ່ງບອກເຖິງລັກສະນະສະເພາະຂອງການອອກແບບຢ່າງຊັດເຈນ, ຄວາມໃໝ່ (Novelty) ທີ່ແຕກຕ່າງຈາກແບບອຸດສາຫະກຳທີ່ມີມາກ່ອນແລ້ວ ໂດຍສອດຄ່ອງກັບຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ຄັດຕິດໃນສຳນວນຄຳຮ້ອງ ແລະ ລະບຸ ກ່ຽວກັບການນຳໃຊ້ກັບຜະລິດຕະພັນ ຫຼື ເປັນສິນຄ້າໃດໜຶ່ງ;

ກໍລະນີ ແບບນັ້ນຫາກໄດ້ມາຈາກພູມປັນຍາພື້ນບ້ານອັນເປັນມູນເຊື້ອ ຫຼື ການສະແດງອອກທາງດ້ານວັດທະນະທຳທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍກົງ ຫຼື ຢ່າງຫຼວງຫຼາຍ ຕ້ອງໄດ້ເປີດເຜີຍ ຫຼື ແຈ້ງບອກແຫຼ່ງທີ່ມາ ຫຼື ຊຸມຊົນທ້ອງຖິ່ນ ຫຼື ຊົນເຜົ່າທີ່ກ່ຽວຂ້ອງ;

ແບບອຸດສາຫະກຳ ທີ່ເປັນສິ່ງປະດັບ (Ornamental) ຕ້ອງອະທິບາຍໃຫ້ເຫັນຄວາມກ່ຽວຂ້ອງ ຂອງແບບວັດຖຸ ທີ່ນຳເອົາໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸນັ້ນເອງ ຊຶ່ງເຮັດໃຫ້ເກີດມີຮູບຊົງພາຍນອກພິເສດທີ່ແຕກຕ່າງຈາກແບບເດີມ;

ແບບອຸດສາຫະກຳ ທີ່ເປັນຊຸດຜະລິດຕະພັນ ຫຼື ສິນຄ້າ, ຕ້ອງອະທິບາຍໃຫ້ເຫັນເຖິງລັກສະນະຂອງແຕ່ລະອັນຂອງຊຸດຜະລິດຕະພັນ ຫຼື ສິນຄ້ານັ້ນ ຢ່າງຊັດເຈນ.

**ມາດຕາ 12 ການຈັດໝວດສາກົນ ກ່ຽວກັບແບບອຸດສາຫະກຳ**

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕ້ອງລະບຸໝວດ ຕາມການຈັດໝວດແບບຂອງສາກົນສຳລັບຜະລິດຕະພັນ ຫຼື ສິນຄ້າ (Locarno Classification) ທີ່ມີການປ່ຽນແປງເປັນແຕ່ລະໄລຍະ ຊຶ່ງກຳລັງນຳໃຊ້ໃນເວລາຍື່ນຄຳຮ້ອງ ສຳລັບໝວດຂອງປະເພດແບບອຸດສາຫະກຳ ຂອງຜະລິດຕະພັນ ຫຼື ສິນຄ້າ ທີ່ກ່ຽວຂ້ອງກັບແບບອຸດສາຫະກຳເທົ່ານັ້ນ.

ກໍລະນີ ການຈັດໝວດສາກົນ ຫາກມີການປ່ຽນແປງໃນລະຫວ່າງການດຳເນີນການພິຈາລະນາຄຳຮ້ອງ, ກົມຊັບສິນທາງປັນຍາ ຕ້ອງແຈ້ງຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃຫ້ຜູ້ຮ້ອງຂໍຊາບ ເພື່ອດັດແກ້ຄຳຮ້ອງ ໂດຍລະບຸໝວດ (Class) ແລະ ລາຍການຍ່ອຍ (Sub-class) ຂອງຜະລິດຕະພັນ ຫຼື ສິນຄ້າໃຫ້ຖືກຕ້ອງ.

**ມາດຕາ 13 ຫຼັກການພິຈາລະນາຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ການພິຈາລະນາຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕ້ອງປະຕິບັດຕາມຫຼັກການ ທີ່ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ກໍລະນີ ການຍື່ນຄຳຮ້ອງຂໍການຈົດທະບຽນແບບອຸດສາຫະກຳ ຫຼາຍສະບັບ ພາຍໃນໄລຍະດຽວກັນ ທີ່ເປັນແບບອຸດສາຫະກຳດຽວກັນ ຫຼື ຄ້າຍຄືກັນນັ້ນ ໃຫ້ພິຈາລະນາເປັນຫຼັກການຄຳຮ້ອງທີ່ຍື່ນກ່ອນ ໂດຍຖືເອົາວັນບູລິມະສິດ ຖ້າມີ, ຊຶ່ງຄຳຮ້ອງຂໍດັ່ງກ່າວຄົບຖ້ວນຕາມເງື່ອນໄຂ.

ກໍລະນີ ກົມຊັບສິນທາງປັນຍາ ໄດ້ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງແລ້ວ ໃຫ້ຈົດທະບຽນຄຳຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດ ຄຳຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງ. ຖ້າຫາກການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງນັ້ນ ຫາກສຳເລັດກ່ອນ ແລະ ຄຳຮ້ອງດັ່ງກ່າວມີເງື່ອນໄຂໃນການໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄຳຮ້ອງດັ່ງກ່າວນັ້ນໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນນັ້ນຈະສິ້ນສຸດລົງ.

ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄຳແນະນຳ ກ່ຽວກັບຄວາມເປັນໄປໄດ້ວ່າແບບອຸດສາຫະກຳ ນັ້ນສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 14 ການກວດສອບເບື້ອງຕົ້ນ**

ພາຍຫຼັງໄດ້ຮັບຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາແລ້ວ ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ສອດຄ່ອງຕາມທີ່ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 7, 8, 9, 10, 11 ແລະ 12 ຂອງຂໍ້ຕົກລົງສະບັບນີ້, ການກວດສອບເບື້ອງຕົ້ນ ຕ້ອງໃຫ້ສໍາເລັດ ພາຍໃນ ສິບວັນ ນັບແຕ່ວັນທີຮັບສໍານວນຄໍາຮ້ອງເປັນຕົ້ນໄປ.

ຖ້າຫາກສໍານວນຄໍາຮ້ອງ ບໍ່ສອດຄ່ອງຕາມເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ພາຍໃນ ສາມວັນ ລັດຖະການ, ເພື່ອສະໜອງເອກະສານ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ບໍ່ສາມາດປະຕິບັດ ພາຍໃນກໍານົດເວລາ, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງເປັນລາຍລັກອັກສອນ ຫຼື ແຈ້ງຜ່ານທາງເອເລັກໂຕຣນິກ ໃຫ້ຜູ້ຍື່ນຄໍາຮ້ອງຊາບວ່າຄໍາຮ້ອງບໍ່ໄດ້ຮັບການພິຈາລະນາ ແລະ ຖືວ່າສະຫຼະສິດ.

ກໍລະນີ ເອກະສານຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 15 ການເຜີຍແຜ່ຄໍາຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ພາຍຫຼັງສໍາເລັດການກວດສອບເບື້ອງຕົ້ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ພາຍໃນສິບຫ້າ ວັນ ລັດຖະການ, ການເຜີຍແຜ່ເອກະສານຄໍາຮ້ອງ ຕ້ອງປະກອບມີຂໍ້ມູນ ດັ່ງນີ້:

1. ຫົວຂໍ້ຂອງແບບອຸດສາຫະກໍາ;
2. ຮູບຂອງແບບອຸດສາຫະກໍາ;
3. ໝວດ ຂອງແບບອຸດສາຫະກໍາ;
4. ເລກທີ ແລະ ວັນທີຍື່ນຄໍາຮ້ອງ;
5. ຊື່ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນແບບບອຸດສາຫະກໍາ ມີຈຸດປະສົງ ບໍ່ໃຫ້ເປີດເຜີຍຮູບຂອງແບບອຸດສາຫະກໍາ ຕໍ່ສາທາລະນະຊົນ, ຜູ້ຮ້ອງຂໍຕ້ອງສະເໜີເປັນລາຍລັກອັກສອນໃນເວລາຍື່ນຄໍາຮ້ອງ ເພື່ອຂໍເລື່ອນເວລາການເປີດເຜີຍຮູບຂອງແບບອຸດສາຫະກໍາ ເຊັ່ນ: ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ໃນໄລຍະເວລາບໍ່ເກີນ ສິບແປດ ເດືອນ ນັບຈາກວັນທີພິມເຜີຍແຜ່ຄໍາຮ້ອງ ຫຼື ວັນບູລິມະສິດ ຖ້າມີ ເປັນຕົ້ນໄປ ແລະ ຕ້ອງຈ່າຍ ຄ່າທໍານຽມ ແລະ ຄ່າບໍລິການ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄໍາຮ້ອງຈົດທະບຽນແບບອຸດສາຫະກໍາ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມທີ່ກໍານົດໄວ້ໃນວັກທີ 3 ມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນ ຫົກສິບ ວັນ ນັບແຕ່ວັນທີໄດ້ເຜີຍແຜ່ລົງຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສົ່ງຄໍາຮ້ອງຂໍຄັດຄ້ານດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາ ເພື່ອດໍາເນີນການຕາມຂັ້ນຕອນຕໍ່ໄປ.

**ມາດຕາ 16 ການກວດສອບເນື້ອໃນ**

ພາຍຫຼັງກວດສອບເບື້ອງຕົ້ນສໍາເລັດແລ້ວ, ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນ ໂດຍອີງຕາມລະບົບຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ ແລະ ສາກົນ ຕາມທີ່ກໍານົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄໍາຮ້ອງນັ້ນ ໃຫ້ສອດຄ່ອງກັບເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳຊາບ ກ່ຽວກັບການປະຕິເສດເບື້ອງຕົ້ນການຈົດທະບຽນແບບອຸດສາຫະກຳ ຖ້າຫາກສຳນວນຄຳຮ້ອງບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນແບບອຸດສາຫະກຳ, ໂດຍຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕ້ອງສະໜອງເອກະສານ, ຂໍ້ມູນ, ຫຼັກຖານ, ຫຼື ຄຳຊີ້ແຈງ ຫຼື ຄຳໂຕ້ແຍ່ງ ໃຫ້ກົມຊັບສິນທາງປັນຍາ ໂດຍຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພາຍໃນຫົກສິບ ວັນ ນັບແຕ່ວັນອອກແຈ້ງການປະຕິເສດເບື້ອງຕົ້ນ. ຖ້າຫາກຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ມີເຫດຜົນພຽງພໍ ໂດຍແຈ້ງເປັນລາຍລັກອັກສອນ, ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ ສາມສິບ ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ, ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ.

ກໍລະນີ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຫາກມີວັດຖຸອື່ນປະກອບຢູ່ນຳ ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳຢັ້ງຢືນວ່າ ວັດຖຸດັ່ງກ່າວ ເປັນພາກສ່ວນໜຶ່ງຂອງແບບອຸດສາຫະກຳ ຫຼື ເປັນພາກສ່ວນອື່ນ. ໃນກໍລະນີ ກົມຊັບສິນທາງປັນຍາ ຫາກກວດສອບແລ້ວເຫັນວ່າ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ຢູ່ໃນສຳນວນຄຳຮ້ອງ ບໍ່ມີຄວາມກ່ຽວຂ້ອງ ຫຼື ບໍ່ແມ່ນອົງປະກອບຂອງແບບທີ່ຍື່ນຂໍ ຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ກົມຊັບສິນທາງປັນຍາ ເຫັນວ່າຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ປະກອບມີຮູບຮ່າງພາຍນອກຂອງແບບອຸດສາຫະກຳ ທີ່ບໍ່ສາມາດເຂົ້າໃຈໄດ້ ກົມຕ້ອງແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບໃໝ່ ທີ່ສາມາດເຂົ້າໃຈໄດ້ ແລະ ຊັດເຈນຂຶ້ນ.

ກໍລະນີ ກົມຊັບສິນທາງປັນຍາ ເຫັນວ່າບົດອະທິບາຍບໍ່ໄດ້ລະບຸ ກ່ຽວກັບການນຳໃຊ້ພູມປັນຍາພື້ນບ້ານອັນເປັນມູນເຊື້ອ ຫຼື ການສະແດງອອກທາງດ້ານວັດທະນະທຳທ້ອງຖິ່ນ ເຂົ້າໃນແບບທີ່ຍື່ນຂໍປົກປ້ອງ, ກົມຊັບສິນທາງປັນຍາ ຕ້ອງແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງຂໍ້ມູນຄືນໃໝ່ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17 ການປະເມີນຄວາມໃໝ່ຂອງແບບອຸດສາຫະກຳ (Novelty)**

ການປະເມີນຄວາມໃໝ່ຂອງແບບອຸດສາຫະກຳ ກົມຊັບສິນທາງປັນຍາ ຕ້ອງສົມທຽບແບບທີ່ຢູ່ໃນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ກັບຂໍ້ມູນທີ່ມີການເຜີຍແຜ່ກ່ອນໜ້າ ແລະ ຂໍ້ມູນການຈົດທະບຽນ ທີ່ມີຢູ່ໃນ ສປປ ລາວ ແລະ ຕ່າງປະເທດ ພ້ອມທັງຂໍ້ມູນອື່ນໆທີ່ໄດ້ເຜີຍແຜ່ສູ່ສາທາລະນະ.

ຖ້າຫາກແບບອຸດສາຫະກຳ ທີ່ກຳລັງພິຈາລະນາຢູ່ນັ້ນ ຄືກັນກັບແບບອຸດສາຫະກຳ ທີ່ໄດ້ຖືກເປີດເຜີຍມາກ່ອນແລ້ວ ຈະຖືວ່າບໍ່ເປັນສິ່ງໃໝ່.

ການດຳເນີນການຕໍ່ໄປນີ້ ຢູ່ແຫ່ງໃດໜຶ່ງໃນໂລກ ຈະຖືວ່າເປັນການເປີດເຜີຍແບບອຸດສາຫະກຳ ຄື:

1. ໄດ້ຮັບການຈົດທະບຽນ;
2. ເຜີຍແຜ່ ຫຼື ສາມາດກວດຄົ້ນແບບອຸດສາຫະກຳດັ່ງກ່າວ;
3. ເຜີຍແຜ່ໃນ, ສື່ສິ່ງພິມ, ສື່ເອເລັກໂຕຣນິກ, ສື່ໂຄສະນາ-ການຕະຫຼາດ ຫຼື ບົດຂຽນຕ່າງໆ;
4. ການຫາຜົນປະໂຫຍດທາງການຄ້າຈາກແບບອຸດສາຫະກຳ ຫຼື ວັດຖຸທີ່ນຳໃຊ້ກັບແບບດັ່ງກ່າວ ຫຼື ປະກອບມີແບບອຸດສາຫະກຳ.

ກໍລະນີ ຍົກເວັ້ນການຕິດຕໍ່ພົວພັນ ຫຼື ການສົ່ງຂໍ້ມູນ ກ່ຽວກັບແບບອຸດສາຫະກຳ ຈະບໍ່ຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ ຖ້າວ່າການຕິດຕໍ່ພົວພັນເປັນການກະທຳພາຍໃຕ້ຂໍ້ສັນຍາ ຫຼື ຢູ່ໃນເງື່ອນໄຂທີ່ບໍ່ມີເຈດຕະນານຳໄປສູ່ການເປີດເຜີຍຂໍ້ມູນດັ່ງກ່າວ ຕໍ່ສາທາລະນະຊົນ.

ການຕິດຕໍ່ພົວພັນຈະບໍ່ຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ ດັ່ງນີ້:

1. ພາຍໃຕ້ ຂໍ້ສັນຍາວ່າດ້ວຍການຮັກສາຄວາມລັບ ທີ່ເປັນລາຍລັກອັກສອນ;
2. ພາຍໃນອົງກອນ ຫຼື ວິສາຫະກິດ ທີ່ເປັນຜູ້ຖືສິດ;

3. ພາຍໃນຄອບຄົວ, ວົງສາຄະນາຍາດ ຫຼື ບຸກຄົນຮູ້ຈັກທີ່ຖືກແຕ່ງຕັ້ງ;

4. ຕໍ່ກັບທະນາຍຄວາມ ຫຼື ຕົວແທນ;

5. ຕໍ່ກັບຜູ້ທີ່ຈະໄດ້ຮັບສິດຕໍ່ແບບອຸດສາຫະກຳ ທີ່ບໍ່ທັນໄດ້ນຳໄປໃຊ້ໃນທາງການຄ້າ.

ກໍລະນີ ກົມຊັບສິນທາງປັນຍາ ຫາກມີຄວາມສົງໄສ ກ່ຽວກັບຄວາມໃໝ່ຂອງແບບອຸດສາຫະກຳ ສາມາດແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສະໜອງຄຳຊີ້ແຈງ ເພື່ອອະທິບາຍ ກ່ຽວກັບທຸກການເປີດເຜີຍ ຫຼື ການຕິດຕໍ່ພົວພັນຕ່າງໆ.

ສຳລັບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ຮຽກຮ້ອງອັນບຸລິມະສິດ ພາຍໃຕ້ສົນທິສັນຍາສາກົນ, ກົມຊັບສິນທາງປັນຍາ ສາມາດຮັບຮອງເອົາຜົນຂອງການກວດສອບຄວາມໃໝ່ ຂອງແບບອຸດສາຫະກຳ ໂດຍໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 18 ການປະເມີນເພື່ອຈຳແນກເປັນສິ່ງປະດັບ ແລະ ລັກສະນະທາງດ້ານເຕັກນິກ**

ແບບອຸດສາຫະກຳ ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳໃຊ້ກັບແບບອຸດສາຫະກຳ ຫຼື ປະກອບມີແບບອຸດສາຫະກຳ ຢູ່ນຳນັ້ນ ມີຮູບຊົງພາຍນອກທີ່ພິເສດ. ເງື່ອນໄຂຂອງການເປັນສິ່ງປະດັບ ຕ້ອງຖືກປະເມີນບົນພື້ນຖານຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກຳ ໂດຍຄຳນຶງເຖິງ ຮູບຮ່າງ, ເສັ້ນສາຍ, ສີສັນ ຫຼື ອົງປະກອບອື່ນໆ ທີ່ປະກອບສ່ວນເຂົ້າໃນຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກຳ.

ຫາກວ່າວັດຖຸມີຮູບຊົງພາຍນອກທີ່ໂດດເດັ່ນ, ແຕ່ບໍ່ສາມາດເປັນສິ່ງປະດັບໄດ້ ຖ້າວ່າຮູບຊົງພາຍນອກສະແດງອອກເຖິງລັກສະນະທາງດ້ານເຕັກນິກຂອງການປະດິດສ້າງ ຕ້ອງຖືກປະຕິເສດການຈົດທະບຽນແບບອຸດສາຫະກຳ ຕາມທີ່ກຳນົດໄວ້ໃນຂໍ້ທີ 1 ມາດຕາ 22 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 19 ການດັດແກ້ຄຳຮ້ອງ**

ໃນໄລຍະການກວດສອບເນື້ອໃນ ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດດັດແກ້ຄຳຮ້ອງໄດ້, ແຕ່ຕ້ອງດຳເນີນການກ່ອນການຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄຳຮ້ອງດັ່ງກ່າວ ຕາມທີ່ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງການດັດແກ້ຄຳຮ້ອງນັ້ນ ຕ້ອງບໍ່ໃຫ້ເພີ່ມແບບ, ໝວດຂອງປະເພດ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງແບບ ທີ່ຢູ່ໃນຄຳຮ້ອງເບື້ອງຕົ້ນ.

**ມາດຕາ 20 ການແຍກຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳໃດໜຶ່ງ ສາມາດແຍກອອກເປັນສອງ ຫຼື ຫຼາຍສະບັບໄດ້ ໂດຍຕ້ອງຍື່ນຄຳຮ້ອງຂໍແຍກກ່ອນໜ້າການຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ.

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ຖືກແຍກອອກມານັ້ນ ຕ້ອງມີການອ້າງອີງໃສ່ຄຳຮ້ອງເບື້ອງຕົ້ນ ເພື່ອໃຫ້ຮູ້ຄຳຮ້ອງ ທີ່ແຍກອອກຈາກສະບັບຕົ້ນ ແລະ ໃຊ້ເປັນອັນບຸລິມະສິດ ໂດຍຕ້ອງລະບຸເລກທີ ແລະ ວັນທີຍື່ນຄຳຮ້ອງເບື້ອງຕົ້ນ ໃສ່ຄຳຮ້ອງທີ່ຖືກແຍກແຕ່ລະສະບັບ. ສຳລັບຄຳຮ້ອງເບື້ອງຕົ້ນນັ້ນ ຕ້ອງມີການດັດແກ້ ໂດຍຮັກສາໄວ້ພຽງແຕ່ໝວດຂອງປະເພດແບບອຸດສາຫະກຳທີ່ຍັງເຫຼືອ. ຄຳຮ້ອງທີ່ແຍກອອກມານັ້ນ ຕ້ອງຍື່ນພ້ອມກັບຄຳຮ້ອງເບື້ອງຕົ້ນທີ່ໄດ້ຖືກດັດແກ້ແລ້ວ ຊຶ່ງຕ້ອງໄດ້ຮັບເລກທີ ແລະ ວັນທີຍື່ນໃໝ່ ຕາມວັນທີທີ່ຍື່ນຄຳຮ້ອງຂໍແຍກ ແລະ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມແຕ່ລະສະບັບທີ່ໄດ້ແຍກອອກ ຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 21 ການຈົດທະບຽນແບບອຸດສາຫະກຳ**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ ພ້ອມທັງບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນປຶ້ມບັນທຶກການຈົດທະບຽນ ແລະ ລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ ພາຍຫຼັງທີ່ສອດຄ່ອງຕາມເງື່ອນໄຂການໄດ້ຮັບໃບຢັ້ງຢືນຈົດທະບຽນແບບອຸດສາຫະກຳ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 22 ການເຜີຍແຜ່ຜົນຂອງການຈົດທະບຽນແບບອຸດສາຫະກຳ**

ພາຍຫຼັງການຈົດທະບຽນແບບອຸດສາຫະກຳແລ້ວ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດສະເໜີຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຖ້າຫາກວ່າການເຜີຍແຜ່ມີຂໍ້ຜິດພາດ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ແລະ ຕ້ອງຍື່ນຄຳຮ້ອງຂໍ ພາຍໃນ ຫົກສິບ ວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 3
## ການດຳເນີນການຫຼັງການຈົດທະບຽນແບບອຸດສາຫະກຳ

**ມາດຕາ 23 ການປ່ຽນແປງຂໍ້ມູນຫຼັງການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອປ່ຽນແປງຂໍ້ມູນ ກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງແບບອຸດສາຫະກຳ ຫຼື ຜູ້ຕາງໜ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ພິຈາລະນາປ່ຽນແປງຂໍ້ມູນ ແລະ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 24 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳໄດ້ ເພື່ອນຳໃຊ້ເປັນຫຼັກຖານ ໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນແບບອຸດສາຫະກຳ ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນ ຫຼື ຕໍ່ອາຍຸ ທີ່ເສຍຫາຍ ຫຼື ຊອກບໍ່ເຫັນ ຊຶ່ງເຈົ້າຂອງແບບອຸດສາຫະກຳ ທີ່ໄດ້ຮັບການຈົດທະບຽນ ຢູ່ນຳກົມຊັບສິນທາງປັນຍາ ຕ້ອງຍື່ນຄຳຮ້ອງ ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫຼື ນະຄອນຫຼວງ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 25 ການດັດແກ້ພາຍຫຼັງການຈົດທະບຽນ**

ພາຍຫຼັງແບບອຸດສາຫະກຳ ໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນສຳລັບບາງລາຍການໃນໝວດອຸດສາຫະກຳທີ່ໄດ້ຈົດທະບຽນ, ຂໍສະຫຼະສິດຕໍ່ບາງສ່ວນຂອງແບບອຸດສາຫະກຳ, ຂໍດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ຫຼື ດັດແກ້ຕົວຢ່າງຂອງແບບອຸດສາຫະກຳ ໂດຍຍື່ນຄຳຮ້ອງ ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວອະນຸຍາດໃຫ້ດັດແກ້ໄດ້ພຽງເລັກນ້ອຍ ໂດຍບໍ່ປ່ຽນແປງລັກສະນະພື້ນຕໍຂອງແບບອຸດສາຫະກຳ.

ກໍລະນີ ການດັດແກ້ໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳທີ່ມີຂໍ້ຜິດພາດ ທີ່ເກີດຈາກກົມຊັບສິນທາງປັນຍາ ຜູ້ຮ້ອງຂໍຈະບໍ່ໄດ້ຈ່າຍຄ່າບໍລິການ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ລົງໃນຈົດໝາຍເຫດທາງລັດຖະການ.

**ມາດຕາ 26 ການຍົກເລີກແບບອຸດສາຫະກຳ ອີງຕາມຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດໃຫ້ເຂົ້າໃຈຜິດ**

ແບບອຸດສາຫະກຳ ທີ່ໄດ້ຈົດທະບຽນໄປແລ້ວນັ້ນ ຖ້າຫາກຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດໃຫ້ເຂົ້າໃຈຜິດຢູ່ໃນສຳນວນຄຳຮ້ອງ, ປິດບັງຂໍ້ມູນ ຫຼື ມີການກະທຳໃດໜຶ່ງທີ່ລະເມີດ ຫຼື ສອດຄ່ອງກັບນິຕິກຳ ແລະ ກົດໝາຍ, ຊຶ່ງຖ້າຫາກຂໍ້ມູນດັ່ງກ່າວມີມູນຄວາມຈິງ ກົມຊັບສິນທາງປັນຍາ ຕ້ອງດຳເນີນຂັ້ນຕອນການຍົກເລີກທາງດ້ານບໍລິຫານ ແລະ ຕ້ອງແຈ້ງໃຫ້ເຈົ້າຂອງແບບອຸດສາຫະກຳ ຮັບຊາບ.

ຖ້າຫາກວ່າເຈົ້າຂອງແບບອຸດສາຫະກຳ ບໍ່ເຫັນດີຕໍ່ກັບແຈ້ງການຍົກເລີກດັ່ງກ່າວ ສາມາດສະເໜີຂໍພິຈາລະນາແກ້ໄຂທາງດ້ານບໍລິຫານ ຢູ່ກົມຊັບສິນທາງປັນຍາ ຫຼື ສານປະຊາຊົນ.

**ມາດຕາ 27 ອາຍຸການປົກປ້ອງ**

ແບບອຸດສາຫະກໍາ ມີອາຍຸການປົກປ້ອງ ສິບຫ້າ ປີ ນັບແຕ່ວັນຍື່ນຄໍາຮ້ອງເປັນຕົ້ນໄປ, ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບອຸດສາຫະກໍາຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ລ່ວງໜ້າຄັ້ງລະ ຫ້າ ປີ.

**ມາດຕາ 28 ການຮັກສາອາຍຸການປົກປ້ອງ**

ແບບອຸດສາຫະກໍາ ທີ່ໄດ້ຈົດທະບຽນແລ້ວ ມີອາຍຸການປົກປ້ອງເບື້ອງຕົ້ນ ຫ້າ ປີ , ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບອຸດສາຫະກໍາ ສາມາດຂໍຮັກສາອາຍຸການປົກປ້ອງໄດ້ ສອງ ຄັ້ງ, ຄັ້ງລະ ຫ້າ ປີ ໂດຍຍື່ນຄໍາຮ້ອງຂໍຕໍ່ອາຍຸການປົກປ້ອງ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມທັງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ຊຶ່ງການຍື່ນຄໍາຮ້ອງຂໍຕໍ່ອາຍຸການປົກປ້ອງແຕ່ລະຄັ້ງ ຕ້ອງຍື່ນຄໍາຮ້ອງພາຍໃນ ຫົກ ເດືອນ ກ່ອນວັນສິ້ນສຸດອາຍຸການປົກປ້ອງ;

ກໍລະນີ ການປົກປ້ອງແບບອຸດສາຫະກໍາ ໝົດອາຍຸ ແຕ່ຍັງບໍ່ທັນໄດ້ຍື່ນຄໍາຮ້ອງຂໍຕໍ່ອາຍຸການປົກປ້ອງ ສາມາດຍື່ນຄໍາຮ້ອງຂໍຕໍ່ອາຍຸການປົກປ້ອງໄດ້ ແຕ່ຕ້ອງຍື່ນຄໍາຮ້ອງພາຍໃນ ຫົກ ເດືອນ ນັບແຕ່ວັນສິ້ນສຸດອາຍຸການປົກປ້ອງດັ່ງກ່າວ ພ້ອມທັງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການຮັກສາອາຍຸການປົກປ້ອງ ແຕ່ຕ້ອງໄດ້ຈ່າຍຄ່າປັບໃໝສໍາລັບຄວາມລ່າຊ້າ;

ຖ້າຫາກມື້ສຸດທ້າຍຂອງອາຍຸການປົກປ້ອງແບບອຸດສາຫະກໍາ ເປັນວັນພັກທາງລັດຖະການ ຫຼື ວັນທີ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄໍາຮ້ອງ ຫຼື ວັນທີຮັບຄໍາຮ້ອງຕ້ອງຕໍ່ເວລາອອກໄປຈົນເຖິງ ວັນລັດຖະການທໍາອິດຖັດໄປ;

ແບບອຸດສາຫະກໍາ ທີ່ບໍ່ມີການຂໍຮັກສາອາຍຸການປົກປ້ອງ ຫຼື ສິ້ນສຸດອາຍຸການປົກປ້ອງ ຈະຖືວ່າເປັນຊັບສິນທາງປັນຍາ ຂອງສາທາລະນະຊົນ.

**ມາດຕາ 29 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງແບບອຸດສາຫະກໍາ ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ໂດຍເຮັດເປັນລາຍລັກອັກສອນ ເຊັ່ນ: ການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ກໍລະນີ ມີການໂອນສິດຕໍ່ແບບອຸດສາຫະກໍາ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດຕ້ອງແຈ້ງກ່ຽວກັບການໂອນສິດດັ່ງກ່າວຕາມແບບພິມຂອງກົມຊັບສິນທາງປັນຍາ ຜ່ານພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງຊາບ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ;

ກົມຊັບສິນທາງປັນຍາ ຕ້ອງແຈ້ງຮັບຮູ້ ກ່ຽວກັບການໂອນສິດດັ່ງກ່າວ ເປັນລາຍລັກອັກສອນ ໃຫ້ແກ່ຜູ້ຮັບໂອນສິດ ແລະ ບັນທຶກການໂອນສິດເຂົ້າໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ. ຖ້າຜູ້ທີ່ໄດ້ຮັບໂອນສິດ ຫາກເປັນຜູ້ແຈ້ງການໂອນສິດ ຜູ້ກ່ຽວຕ້ອງສົ່ງສໍາເນົາແຈ້ງຮັບຮູ້ ກ່ຽວກັບໃບຢັ້ງຢືນການໂອນສິດ ດັ່ງກ່າວໃຫ້ຜູ້ໂອນສິດ.

ກໍລະນີ ມີການໂອນກໍາມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວຂ້ອງກັບແບບອຸດສາຫະກໍາ ຕ້ອງປະຕິບັດຕາມທີ່ກໍານົດໄວ້ໃນເອກະສານການໂອນສິດດັ່ງກ່າວ. ກໍລະນີ ບໍ່ໄດ້ກໍານົດໄວ້ເປັນຢ່າງອື່ນ, ການໂອນກໍາມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຖືວ່າເປັນການໂອນສິດທັງໝົດຕໍ່ແບບອຸດສາຫະກໍາ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;

ຖ້າຫາກຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດແຈ້ງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ແຈ້ງການໂອນສິດນັ້ນສະໜອງຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

**ມາດຕາ 30 ການອະນຸຍາດນໍາໃຊ້**

ເຈົ້າຂອງສິດຕໍ່ແບບອຸດສາຫະກໍາ ສາມາດອະນຸຍາດໃຫ້ບຸກຄົນອື່ນ ນໍາໃຊ້ແບບອຸດສາຫະກໍາຂອງຕົນບາງສ່ວນ ຫຼື ທັງໝົດ ເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ຊຶ່ງສາມາດດໍາເນີນການໂດຍການເຮັດສັນຍາການອະນຸຍາດນໍາໃຊ້ ແຕ່ບໍ່ຖືເປັນການໂອນກໍາມະສິດແບບອຸດສາຫະກໍາ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ທີ 2 ແລະ 4 ມາດຕາ 47 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ອະນຸຍາດນໍາໃຊ້ ຫຼື ຜູ້ໄດ້ຮັບອະນຸຍາດນໍາໃຊ້ ຕ້ອງແຈ້ງຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົ່ງຕໍ່ກົມຊັບສິນທາງປັນຍາຊາບ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ມີການໂອນກໍາມະສິດ ຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນໍາໃຊ້ແບບອຸດສາຫະກໍາ ໃຫ້ຖືວ່າການອະນຸຍາດນໍາໃຊ້ດັ່ງກ່າວ ຖືກໂອນພ້ອມກັບການໂອນກໍາມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກໍານົດໄວ້ເປັນຢ່າງອື່ນ ຢູ່ໃນສັນຍາການອະນຸຍາດນໍາໃຊ້ ຫຼື ໃນເອກະສານການໂອນກໍາມະສິດດັ່ງກ່າວ.

ກໍລະນີ ມີການໂອນກໍາມະສິດ ຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນໍາໃຊ້ແບບອຸດສາຫະກໍາດັ່ງກ່າວ, ສັນຍາການອະນຸຍາດນໍາໃຊ້ແບບອຸດສາຫະກໍາໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ໄດ້ກໍານົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນໍາໃຊ້

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກໍາ ແລະ ດໍາເນີນການອື່ນ

**ມາດຕາ 31 ການເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກໍາ ແລະ ດໍາເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າ ໃນການດໍາເນີນການຈົດທະບຽນແບບອຸດສາຫະກໍາ ແລະ ດໍາເນີນການອື່ນ ມີດັ່ງນີ້:

1. ບຸກຄົນໃດໜຶ່ງທີ່ໄດ້ຮ່ວມອອກແບບ ແລະ ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ກໍລະນີອອກແບບຮ່ວມກັນຫຼາຍຄົນ, ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການທາງດ້ານກົດໝາຍ ຢູ່ ສປປ ລາວ;
3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສໍາລັບຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

ຜູ້ຕາງໜ້າ ຕ້ອງເປັນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼື ຜູ້ມອບສິດ. ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 32 ການມອບສິດໃຫ້ເປັນຜູ້ຕາງໜ້າ**

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກໍານົດ ດັ່ງນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍ ໃຫ້ດໍາເນີນການໃດໜຶ່ງ ທີ່ກ່ຽວຂ້ອງຢູ່ນໍາພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;
3. ໄລຍະເວລາ.

ກໍລະນີ ມີການປ່ຽນຜູ້ຕາງໜ້າ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ເປັນລາຍລັກອັກສອນ ຕາມແບບພິມທີ່ໄດ້ກໍານົດໄວ້.

ໃບມອບສິດໜຶ່ງຕ້ອງນໍາໃຊ້ສະເພາະແຕ່ຄໍາຮ້ອງດຽວເທົ່ານັ້ນ ຊຶ່ງຕ້ອງລະບຸຫົວຂໍ້ຂອງແບບອຸດສາຫະກໍາທີ່ກ່ຽວຂ້ອງ.

ກໍລະນີ ໃບມອບສິດບໍ່ໄດ້ກໍານົດຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດໍາເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນ ຫາກສໍາເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ກໍລະນີ ຜູ້ອອກໃບມອບສິດເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ໃບມອບສິດຕ້ອງໄດ້ລົງລາຍເຊັນ ໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

ກໍລະນີ ຜູ້ອອກແບບຮ່ວມກັນຫຼາຍຄົນ ຫາກມີຜູ້ໃດຜູ້ໜຶ່ງປະຕິເສດບໍ່ລົງລາຍເຊັນໃນໜັງສືຢັ້ງຢືນກ່ຽວກັບການຖືສິດ ເພື່ອດຳເນີນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຖືວ່າໃບມອບສິດດັ່ງກ່າວບໍ່ມີຜົນບັງຄັບໃຊ້.

## ໝວດທີ 5
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານແບບອຸດສາຫະກຳ

**ມາດຕາ 33 ການຄຸ້ມຄອງວຽກງານແບບອຸດສາຫະກຳ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານການຈົດທະບຽນແບບອຸດສາຫະກຳ ປະກອບມີ ສອງຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນທ້ອງຖິ່ນ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານແບບອຸດສາຫະກຳ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ແນະນຳຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານແບບອຸດສາຫະກຳ;
3. ພິຈາລະນາ ສຳນວນຄຳຮ້ອງຂໍຈົດທະບຽນ, ຮັກສາອາຍຸການ, ປ່ຽນຊື່ ຫຼື ທີ່ຢູ່, ດັດແກ້, ອະນຸຍາດນຳໃຊ້, ໂອນສິດ ແລະ ການສະເໜີອື່ນ ກ່ຽວກັບວຽກງານແບບອຸດສາຫະກຳ;
4. ອອກໃບຢັ້ງຢືນຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລົບລ້າງ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
5. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບວຽກງານແບບອຸດສາຫະກຳ;
6. ໃຫ້ບໍລິການ ການກວດຄົ້ນແບບອຸດສາຫະກຳ ໃນລະບົບຖານຂໍ້ມູນຊັບສິນທາງປັນຍາຂອງກົມຊັບສິນທາງປັນຍາ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄຳຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
8. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ;
9. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມ ວຽກງານແບບອຸດສາຫະກຳ;
10. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ນິຕິກຳ ກ່ຽວກັບວຽກງານແບບອຸດສາຫະກຳ;
2. ຮັບຄຳຮ້ອງ ແລະ ຄຳສະເໜີອື່ນ ກ່ຽວກັບແບບອຸດສາຫະກຳ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕາມເງື່ອນໄຂຕໍ່າສຸດ;

3. ຮັບຄຳຮ້ອງ ແລະ ດຳເນີນການກວດຄົ້ນແບບອຸດສາຫະກຳ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;

4. ນຳສົ່ງສຳນວນຄຳຮ້ອງຂໍຈົດທະບຽນ, ຮັກສາອາຍຸການ, ປ່ຽນຊື່ ຫຼື ທີ່ຢູ່, ດັດແກ້, ອະນຸຍາດນຳໃຊ້, ໂອນສິດ ແລະ ການສະເໜີອື່ນ ກ່ຽວກັບວຽກງານແບບອຸດສາຫະກຳ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ;

5. ມອບໝາຍຄວາມຮັບຜິດຊອບ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;

6. ອຳນວຍຄວາມສະດວກ,ຊຸກຍູ້ ແລະ ສົ່ງເສີມວຽກງານແບບອຸດສາຫະກຳ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ໃຫ້ກົມຊັບສິນທາງປັນຍາ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 36 ການຈັດຕັ້ງປະຕິບັດ

ມອບໃຫ້ກົມຊັບສິນທາງປັນຍາ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 37 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍແບບອຸດສາຫະກຳ ສະບັບເລກທີ 0435/ອຄ, ລົງວັນທີ 30 ມີນາ 2023.

ລັດຖະມົນຕີ

ມະໄລທອງ ກົມມະສິດ